PHU BIA MINING – A MEMBER OF THE PANAUST GROUP OF COMPANIES

7th Floor | Capital Tower | 23 Singha Road | Saysetha District | PO Box 5559 | Vientiane Lao PDR
T: +856 21 268 000 | F: +856 21 268 029 | E: info@panaust.com.au | W: www.panaust.com.au

PHU BIA MINING

ຂ່າວສານ

06 ພຶດສະພາ 2020

# ບໍລິສັດ ແພນອອສ໌ ປະກອບສ່ວນຊ່ວຍລັດຖະບານລາວເພື່ອຕ້ານກັບພະຍາດໂຄວິດ-19 ຈຳນວນ 650,000 ໂດລາສະຫະລັດ

ຢູ່ພິທີມອບຮັບໃນມື້ນີ້ ຢູ່ນະຄອນຫຼວງວຽງຈັນ, ປະທານບໍລິສັດ ພູເບ້ຍ ມາຍນິງ ຈຳກັດ, ທ່ານ ຈັນເພັງ ບຸນນະຜົນ ໄດ້ມອບອຸປະກອນທີ່ຈຳເປັນ ແລະ ເຄື່ອງສະໜອງຕ່າງໆສຳລັບສະຖານທີ່ທາງການແພດ ຊຶ່ງຄັດກອງ ແລະ ປິ່ນປົວຜູ້ຕິດເຊື້ອໂຄວິດ-19 ໃນລາວ.

ເຄື່ອງບໍລິຈາກດັ່ງກ່າວໄດ້ມອບໃຫ້ຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19, ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງການເງິນຂອງລາວ, ພະນະທ່ານ ສົມດີ ດວງດີ.

ການຊ່ວຍເຫຼືອທາງການແພດນີ້ ແມ່ນເປັນສ່ວນໜຶ່ງຂອງບໍລິສັດແມ່ ຂອງບໍລິສັດ ພູເບ້ຍ ມາຍນິງ, ກຸ່ມບໍລິສັດ ແພນອອສ໌, ໄດ້ໃຫ້ການຊ່ວຍເຫຼືອທາງດ້ານການແພດເປັນວັດຖຸປັດໃຈ ຊຶ່ງມີມູນຄ່າ 500,000 ໂດລາສະຫະລັດ ແລະ ທຶນຮອນຈຳນວນ 150,000 ໂດລາສະຫະລັດ ໃຫ້ແກ່ລັດຖະບານລາວ ເພື່ອຊ່ວຍປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດໂຄວິດ-19 ໃນປະເທດລາວ.

ນອກຈາກນັ້ນ, ໃນວັນອາທິດທີ 3 ພຶດສະພາ, ບໍລິສັດ ພູເບ້ຍ ມາຍນິງ ຈຳກັດ ໄດ້ມອບອຸປະກອນການແພດຊຶ່ງມີມູນຄ່າ 100,000 ໂດລາສະຫະລັດ ແລະ ທຶນຮອນຈຳນວນ 50,000 ໂດລາສະຫະລັດ ໃຫ້ແກ່ຕົວແທນຈາກຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ແຂວງໄຊສົມບູນ.

ປະທານບໍລິສັດ ພູເບ້ຍ ມາຍນິງ ຈຳກັດ, ທ່ານ ຈັນເພັງ ບຸນນະຜົນ ໄດ້ກ່າວວ່າ ຕາງໜ້າຄວາມມຸ້ງໝັ້ນຂອງບໍລິສັດ ແພນອອສ໌ ໃນການປ້ອງກັນສຸຂະພາບຂອງປະຊາຊົນໃນລາວ ໃນໄລຍະເກີດສະຖານະການວິກິດ.

“ບໍລິສັດ ພູເບ້ຍ ມາຍນິງ ຈຳກັດ ມີສາຍສຳພັນທີ່ດີ ແລະ ເຂັ້ມແຂງ ກັບລັດຖະບານລາວ. ທີມງານບໍລິຫານ ກຳລັງເຮັດທຸກຢ່າງເພື່ອຊ່ວຍລັດຖະບານລາວດ້ວຍການສະໜອງອຸປະກອນການແພດທີ່ຈຳເປັນ ແລະ ທຶນຮອນ ເພື່ອສືບຕໍ່ວຽກງານຄັດກອງ ແລະ ກວດພະຍາດເພີ່ມຕື່ມ.

ທ່ານ ຈັນເພັງໄດ້ກ່າວຕື່ມອີກວ່າ: ພວກເຮົາຈະສືບຕໍ່ໃຫ້ການຊ່ວຍເຫຼືອເພີ່ມຕື່ມໃນເວລາສະຖານະການດີຂຶ້ນ,”

2018 WINNER
ASEAN OSHNET
EXCELLENCE AWARD
OHS MANAGEMENT

2017
LAO PDR LABOUR ORDER MEDAL
2011
LAO PDR LABOUR ORDER
MEDAL CLASS 1
POVERTY REDUCTION

2015 WINNER
AUSTRALIAN CLIMATE
LEADERSHIP AWARDS
MOST PROFITABLE CARBON
REDUCTION ACTIVITY

2013 WINNER
PROJECT
DEVELOPMENT
OF THE YEAR

2013 WINNER
SUSTAINABILITY LEADERSHIP
2010/11 WINNERS
BEST COMMUNITY
DEVELOPMENT




*ຮູບດ້ານເທິງ: (ຊ້າຍ ຫາ ຂວາ) ປະທານບໍລິສັດ ພູເບ້ຍ ມາຍນິງ ຈຳກັດ, ທ່ານ ຈັນເພັງ ບຸນນະພົນ, ຜູ້ອຳນວຍການບໍລິສັດ ພູເບ້ຍ ມາຍນິງ ຈຳກັດ, ຊອນ ແມຊຊີ ແລະ ຕົວແທນຈາກ ບໍລິສັດ ພູເບ້ຍ ມາຍນິງ ຈຳກັດ ມອບເຄື່ອງບໍລິຈາກໃຫ້ຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ພະນະທ່ານ ສົມດີ ດວງດີ ແລະ ຕົວແທນຈາກລັດຖະບານລາວ.*

ສຳລັບຂໍ້ມູນເພີ່ມເຕີມ ກະລຸນາພົວພັນທີມງານຕິດຕໍ່ສື່ສານຂອງ ບໍລິສັດ ພູເບ້ຍມາຍນິງ:

ແກ້ວເລີດສະໄໝ ທຳມະລັງສີ
T: 020 268 000
E: keoleutsamay.thammalangsy@pbm.panaust.com

ພົມວິຫານ ທຽບພົງພັນ
T: 021 268 000
E: Phomvihane.Thiepphougphane@pbm.panaust.com